ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດວິສາຫະກິດໄຟຟ້າລາວ

ເລກທີ: 3628 /ຟຟລ.ຫຟຟລ.
ນະຄອນຫຼວງວຽງຈັນ, ວັນທີ: 01 SEP 2026

# ໜັງສືເຊີນເຂົ້າຮ່ວມປະມູນ

1. ລັດວິສາຫະກິດໄຟຟ້າລາວ ໄດ້ນໍາໃຊ້ຮ່ວງເງິນແຜນງົບປະມານ ແລະ ການລົງທຶນປີ 2026 ເພື່ອເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມເຂົ້າຮ່ວມການປະມູນ ຈັດຊື້ລະບົບຄວາມປອດໄພ ພາຍໃນອາຄານສໍານັກງານໃຫຍ່ ຟຟລ ຂອງພະແນກສະໜັບສະໜູນ, ທີ່ຂຶ້ນກັບ ຫ້ອງການໄຟຟ້າລາວ; ຮັບປະກັນລາຄາ 60 ວັນ, ຮັບປະກັນຄຸນນະພາບ 01 ປີ, ໄລຍະການສະໜອງ ແລະ ຕິດຕັ້ງ ທັງໝົດແມ່ນ 30 ວັນ.
2. ການປະມູນນີ້ຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ: 30/ສພຊ, ລົງວັນທີ: 2 ພະຈິກ 2017 ແລະ ເອກະສານ ຄໍາແນະນໍາການໃຊ້ກົດ ໝາຍ ສະບັບ ເລກທີ: 0477/ກງ, ລົງວັນທີ: 13 ກຸມພາ 2019, ຄໍາແນະນໍາເພີ່ມເຕີມສໍາລັບ ມາດຕາ 23 ແລະ ມາດຕາ 31 ຂອງຄໍາແນະນໍາການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 1995/ກງ, ລົງວັນທີ: 24 ມິຖຸນາ 2019.
3. ຜູ້ປະມູນຕ້ອງມີສໍາເນົາເອກະສານໃບອະນຸຍາດດໍາເນີນທຸລະກິດດ້ານສິນຄ້າ, ບໍລິການ ແລະ ໃບມອບພັນທະອາກອນປີ 2025 ທີ່ຖືກຕ້ອງຕາມກົດໝາຍ.
4. ບໍລິສັດໃດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈ ສາມາດເຮັດໜັງສືສະເໜີ ເພື່ອຊື້ຊອງປະມູນ ແລະ ຮັບເອກະສານປະມູນໄດ້ທີ່ລັດວິສາຫະກິດໄຟຟ້າລາວ (ສໍານັກງານໃຫຍ່), ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ. ໂທ: (856-21) 316133-1117, ພະແນກຈັດຊື້-ຈັດຈ້າງ ໃນໂມງລັດຖະການ, ເລີ່ມແຕ່ວັນທີ: 04/09/2026 ໄປຈົນເຖິງ 12/10/ 2026 ໃນລາຄາ 1,000,000 ກີບ/ຊອງ ຈໍານວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ).
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:30 ໂມງ ຂອງວັນທີ: 12/10/2026 ທີ່ຫ້ອງປະຊຸມຊັ້ນ 08 ຫ້ອງ 802, ສໍານັກງານໃຫຍ່. ຊອງປະມູນໃດສົ່ງຊ້າກວ່າເວລາທີ່ໄດ້ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 09:30 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກໍາມະການຈັດຊື້ ຟຟລ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ.
6. ຜູ້ປະມູນຕ້ອງລົງສໍາຫຼວດສະຖານທີ່ຕົວຈິງ ກ່ອນການເປີດຊອງປະມູນ; ທີ່ລັດວິສາຫະກິດໄຟຟ້າລາວ (ສໍານັກງານໃຫຍ່), ສາມາດຕິດຕໍ່ພົວພັນ ທ້າວ ວຽງສະຫວັນ ພຸມສະຫ້ອນ; ເບີໂທ: 020 54356669.
7. ຜູ້ປະມູນຕ້ອງໄດ້ສະໜອງຫນັງສືຄໍ້າປະກັນຊອງປະມູນໃນມູນຄ່າ 2% ຂອງລາຄາທີ່ສະເໜີຮ່ວມການປະມູນ (ເປັນໜັງສືຄໍ້າປະກັນຈາກທະນາຄານ ຫຼື ເປັນແຊັກວີຊ່າ ເທົ່ານັ້ນທີ່ນໍາໃຊ້ຈົນເຖິງວັນທີ 12/01/ 2027).

ຜູ້ອໍານວຍການໃຫຍ່

ສຸລິຍາ ມະນີວົງ
ຮອງອຳນວຍການ

ຖະໜົນມິດຕະພາບລາວ-ໄທ,ຕູ້ ປ.ນ 309; ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ ສ ປ ປ ລາວ.
ໂທ: (856-21) 316094-1614 ແຟັກ: (856-21) 316118; 263794; ອີເມລ: edlmdo@edl.com.la; ເວັບໄຊ: www.edl.com.la